ຢ່າລືມ ພົບກັນທີ່ເດີນຈອດລົດສູນການຄ້າລາວ-ໄອເຕັກ ທ່ຽວຊົມງານຕະຫລາດນັດຜະລິດຕະພັນກະສິກຳ

ເພື່ອຈັດຕັ້ງຜັນຂະຫຍາຍມະຕິຕົກລົງຂອງຂອງທ່ານນາຍົກລັດຖະມົນຕີ
ສະບັບເລກທີ 51/ນຍ. ລົງວັນທີ30/8/2019.
ວ່າດ້ວຍການສົ່ງເສີມການຊົມໃຊ້ຜະລິດຕະພັນທີ່ຜະລິດໄດ້ຢູ່ພາຍໃນ
ແລະ ຄຸ້ມຄອງການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ ໃຫ້ນັບມື້ຫລຸດລົງ,
ເພື່ອປູກຈິດສຳນຶກໃຫ້ປະຊາຊົນ, ອົງການຈັດຕັ້ງພາກລັດ ແລະ
ເອກະຊົນໄດ້ຊົມໃຊ້ສິນຄ້າທີ່ຄົນລາວຜະລິດພາຍໃນປະເທດຫລາຍຂື້ນເວົ
້າລວມ,

ເວົ້າສະເພາະກໍ່ເພື່ອສົ່ງເສີມການຜະລິດພາຍໃນໃຫ້ມີບ່ອນຈຳຫນ່າຍ,
ສ້າງເງື່ອນໄຂສະດວກແກ່ຜູ້ຜະລິດ ແລະ
ຜູ້ຊື້ໄດ້ມີການພົບປະແລກປ່ຽນຂໍ້ມູນຮ່ວມກັນເພື່ອເຈລະຈາຊື້ຂາຍໃ
ນຕໍ່ຫນ້າ
ເພື່ອກະຕຸ້ນເສດຖະກິດພາຍໃນປະເທດໃຫ້ມີບັນຍາກາດຄຶກຄື້ນ,
ອີກຢ່າງໜຶ່ງກໍ່ເປັນການສ້າງຂະບວນການຂ່ຳນັບຕ້ອນຮັບກອງປະຊຸມສະໄຫມ
ສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ VIII ຢາງເປັນທາງການ ແລະ
ທັງເປັນການຂ່ຳນັບຮັບຕ້ອນວັນຊາດທີ 2 ທັນວາ,
ທາງກອງເລຂາຄະນະສະເພາະກິດສົ່ງເສີມການຜະລິດ ແລະ
ຊົມໃຊ້ຜະລິດຕະພັນທີ່ຜະລິດໄດ້ຢູ່ພາຍໃນ
ຂໍເຊີນຍັງບັນດາອົງການຈັດຕັ້ງລັດ,ເອກະຊົນ ແລະ
ພໍ່ແມ່ນປະຊາຊົນທ່ຽວຊົມງານຕະຫລາດນັດຜະລິດຕະພັນກະສິກຳ
ທີ່ຈະຈັດຂື້ນໃນຄັ້ງວັນທີ 30/11-01/12/2019
ທີ່ເດີ່ນສູນການຄ້າລາວ-ໄອເຕັກ ນະຄອນຫລວງວຽງຈັນ.
ພາຍໃນງານທ່ານຈະໄດ້ທ່ຽວຊົມ ແລະ
ເລືອກຊື້ສິນຄ້າກະສິກຳພືດພັກ,ພັກອີນຊີ,ສິນຄ້າໂອດ໋ອບ,ອຸດສາຫະກຳປຸ
ງແຕ່ງ ແລະ ສິນຄ້າຄອບຄົວຕົວແບບທີ່ມາຈາກ 9
ຕົວເມືອງທົ່ວນະຄອນຫລວງວຽງຈັນ.

 1 / 2

ຢ່າລືມ ພົບກັນທີ່ເດີນຈອດລົດສູນການຄ້າລາວ-ໄອເຕັກ ທ່ຽວຊົມງານຕະຫລາດນັດຜະລິດຕະພັນກະສິກຳ
ຫມາຍເຫດ: ຢ່າລືມ ວັນທີ 30/11-1/12/2019
ນີ້ພົບກັນທີ່ເດີນຈອດລົດສູນການຄ້າລາວ-ໄອເຕັກ ເລີ່ມແຕ່ເວລາ 6:00
ໂມງເຊົ້າເປັນຕົ້ນໄປ.

ແຫຼ່ງຂ່າວ: Medialaos Massmedia
 2 / 2